ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2037 /ອຄ.ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ຕຸລາ 2014.

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ ຫລື ກຸ່ມທຸລະກິດ
- ປະຊາຊົນລາວບັນດາເຜົ່າ

ເລື່ອງ: ທຸລະກິດ ທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ

ບົນພື້ນຖານເນື້ອໃນ ຈິດໃຈວັກສອງ ມາດຕາ 14(ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ-2013 ແນໃສ່: ດ້ານໜຶ່ງ - ສ້າງເງື່ອນໄຂສະດວກໃຫ້ປະຊາຊົນລາວບັນດາເຜົ່າ ກ້າ ແລະ ຮຽນຮູ້ໃນການປະກອບທຸລະກິດດ້ວຍຕົນເອງ (ຈາກນ້ອຍ ໄປຫາໃຫຍ່), ສ້າງແນວຄິດຮູ້ຈັກຄ້າ ຮູ້ຈັກຂາຍ ແລະ ດ້ານສອງ - ສ້າງວຽກເຮັດງານທຳ ສ້າງລາຍໄດ້ ຫຼຸດຜ່ອນຄວາມທຸກຍາກເທື່ອລະກ້າວ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນປະຊາຊົນລາວບັນດາເຜົ່າ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ທຸລະກິດທີ່ບໍ່ຈຳເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ມີດັ່ງນີ້:

1.1. ເສດຖະກິດຄອບຄົວໃນດ້ານການຜະລິດກະສິກຳ ແລະ ຫັດຖະກຳ

ເສດຖະກິດຄອບຄົວໃນດ້ານການຜະລິດກະສິກຳ ແລະ ຫັດຖະກຳ ທີ່ໃຊ້ແຮງງານຂອງສະມາຊິກຄອບຄົວຕົນເອງ ໂດຍບໍ່ຈ້າງແຮງງານບຸກຄົນພາຍນອກ ເວັ້ນເສັຍແຕ່ລະບຽບກົດໝາຍກຳນົດເປັນຢ່າງອື່ນ.

ສະມາຊິກຄອບຄົວ ໝາຍເຖິງ ພໍ່ແມ່, ຜົວ ຫລື ເມຍ, ອ້າຍເອື້ອຍນ້ອງຄີງ ຂອງຜົວ ຫລື ເມຍ ແລະ ລູກຂອງເຈົ້າຂອງຄອບຄົວ ຫລື ລູກຂອງອ້າຍເອື້ອຍນ້ອງຄີງ ທີ່ມີຊື່ໃນສຳມະໂນຄົວດຽວກັນ ຫຼື ທີ່ອາໃສຢູ່ໃນຄອບຄົວດຽວກັນເກີນ ກວ່າ 5 ປີຕິດຕໍ່ກັນ (ໃນກໍລະນີບໍ່ມີປຶ້ມສຳມະໂນຄົວ);

1.2. ຜູ້ຄ້າຂາຍນ້ອຍ (Petty trader)

ຜູ້ຄ້າຂາຍນ້ອຍ ປະກອບດ້ວຍ: ຜູ້ດຳເນີນທຸລະກິດທີ່ມີຮ້ານຄ້າຂະໜາດນ້ອຍ, ຜູ້ຄ້າເລ, ຜູ້ຄ້າແຜງລອຍ ຊຶ່ງມີລາຍຮັບປົກກະຕິຕັ້ງແຕ່ 100.000 ກີບລົງມາຕໍ່ວັນ, ໃນນີ້:

- ຜູ້ຄ້າເລ ໝາຍເຖິງບຸກຄົນທີ່ນຳເອົາສິນຄ້າໄປເລາະຂາຍ ຕາມບ້ານ, ເຮືອນ ຫລື ຕາມສະຖານທີ່ສາທາລະນະ ທີ່ບໍ່ມີຫຼັກແຫຼ່ງແນ່ນອນ;